# ກໍລະນີມີການຕິດເຊື້ອຫຼັງຈາກໄດ້ຮັບວັກຊີນແມ່ນຫຍັງ?

## ຂໍ້ຄວາມ

*[ຈັງຫວະເພັງ]*

*[ການເລົ່າເລື່ອງ]*

ທ່ານອາດຈະເຄີຍໄດ້ຍິນກໍລະນີມີການຕິດເຊື້ອຫຼັງຈາກໄດ້ຮັບວັກຊີນ, ແລະ ທ່ານອາດຈະສົງໃສວ່າ ພວກມັນເປັນໄດ້ແນວໃດ ແລະ ໝາຍຄວາມວ່າແນວໃດ.

ກໍລະນີມີການຕິດເຊື້ອຫຼັງຈາກໄດ້ຮັບວັກຊີນ ເກີດຂຶ້ນເມື່ອຄົນທີ່ໄດ້ຮັບວັກຊີນຄົບຈຳນວນແຕ່ຍັງຄົງກວດພົບການຕິດເຊື້ອໂຄວິດ-19. ນີ້ແມ່ນປົກກະຕິ. ບໍ່ມີວັກຊີນໂຕໃດຈະມີປະສິດທິພາບ 100%.

ມີຄົນໄດ້ຮັບວັກຊີນຫຼາຍຂຶ້ນເທົ່າໃດ, ຈະມີກໍລະນີມີການຕິດເຊື້ອຫຼັງຈາກໄດ້ຮັບວັກຊີນຫຼາຍຂຶ້ນເທົ່ານັ້ນ.

ເວົ້າໄດ້ວ່າໃນສິບຄົນໃດ, ເກົ້າຄົນແມ່ນໄດ້ຮັບວັກຊີນ ແລະ ໜຶ່ງຄົນບໍ່ໄດ້ຮັບ. ທັງໝົດສິບຄົນສຳພັດກັບຄົນທີ່ເປັນໂຄວິດ-19, ແລະ ສອງຄົນຜົນກວດເປັນບວກ. ຄົນໜຶ່ງໄດ້ຮັບວັກຊີນ ແລະ ອີກຄົນໜຶ່ງບໍ່ໄດ້ຮັບວັກຊີນ.

ເຖິງແມ່ນວ່າ ເຄິ່ງໜຶ່ງຂອງການຕິດເຊື້ອແມ່ນກໍລະນີມີການຕິດເຊື້ອຫຼັງຈາກໄດ້ຮັບວັກຊີນກໍ່ຕາມ, ມັນສາມາດເຮັດໃຫ້ມີການເຂົ້າໃຈຜິດ ເນື່ອງຈາກອີກແປດຄົນທີ່ໄດ້ຮັບວັກຊີນແລ້ວບໍ່ມີອາການປ່ວຍຈາກໂຄວິດ-19.

ເຖິງວ່າ ກໍລະນີມີການຕິດເຊື້ອຫຼັງຈາກໄດ້ຮັບວັກຊີນອາດຈະເກີດຂຶ້ນຫຼາຍກວ່າເກົ່າ ໃນຂະນະທີ່ການກາຍພັນຂອງເຊື້ອພະຍາດ ມີຈຳນວນເພີ່ມຂຶ້ນກໍ່ຕາມ, ຄົນທີ່ໄດ້ຮັບການສັກຢາວັກຊີນຄົບຈຳນວນແລ້ວຈະມີໂອກາດປ່ວຍໜັກ ຫຼື ເຂົ້າໂຮງໝໍໜ້ອຍລົງ, ດັ່ງນັ້ນການສັກຢາວັກຊີນແມ່ນມີປະສິດທິຜົນ!

ນີ້ແມ່ນສິ່ງທີ່ສຳຄັນທີ່ສຸດເພື່ອໃຫ້ແນ່ໃຈວ່າ ໂຮງໝໍມີຕຽງພຽງພໍສຳລັບທຸກຄົນ ແລະ ຄົນທີ່ຕ້ອງການການປິ່ນປົວສຸກເສີນ ສາມາດ ເຂົ້າໃຊ້ບໍລິການໄດ້ວ່ອງໄວ.

ການຮັບຢາວັກຊີນແມ່ນວິທີທີ່ດີທີ່ສຸດ ໃນການຊ່ວຍປົກປ້ອງທ່ານ ແລະ ຄົນທີ່ຢູ່ໃກ້ກັບທ່ານຈາກໂຄວິດ-19.

ສຳລັບຂໍ້ມູນເພີ່ມເຕີມສຳລັບໂຄວິດ-19, ເຂົ້າເບິ່ງເວັບໄຊທ໌ຂອງ ພະແນກສາທາລະນະສຸກລັດມິນນີໂຊຕ້າ:
www.health.state.mn.us

*[ຈັງຫວະເພັງ]*

Minnesota Department of Health
Communications Office
PO Box 64975
St. Paul, MN 55164-0975
651-201-4989
health.communications@state.mn.us
www.health.state.mn.us

9/8/21 (Lao)

*ຕ້ອງການໄດ້ຮັບຂໍ້ມູນນີ້ເປັນຮູບແບບອື່ນ, ໂທຫາ: 651-201-4989.*